**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ: 1888/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2026

# ຂໍ້ຕົກລົງ
# ວ່າດ້ວຍ ລະບຽບການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມມະນາຄົມ, ເລກທີ 05/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ, ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ແລະ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ, ສະບັບເລກທີ 13/ສພຊ, ລົງວັນທີ 17 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍ ກອງທຶນພັດທະນາໂທລະຄົມ ແລະ ການຫັນເປັນດິຈິຕອນ, ສະບັບເລກທີ 278/ລບ, ລົງວັນທີ 22 ພຶດສະພາ 2024;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສະບັບເລກທີ 625/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມໜັງສືສະເໜີຂອງອົງການດັດສົມໂທລະຄົມມະນາຄົມ, ເລກທີ 552/ອດທ, ລົງວັນທີ 27 ພຶດສະພາ 2026.

**ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ເພື່ອໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍລະບຽບການ ຂອງຂະແໜງການ ການເງິນ, ໃຫ້ມີຄວາມເປັນເອກະພາບ, ມີປະສິດທິພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້, ແນໃສ່ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ.

ມາດຕາ 2 ການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ.

ການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ແມ່ນ ເພື່ອຊຸກຍູ້, ສົ່ງເສີມ ໃຫ້ທຸກພາກສ່ວນ ປະກອບສ່ວນໃນການຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ດ້ວຍຮູບແບບນະໂຍບາຍ, ເປັນເງິນບຳເນັດ ແລະ ຄ່າແຮງງານພິເສດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ມາດຕາ 3 ການອະທິບາຍສັບ

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ມີຜົນງານ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ຄະນະຕິດຕາມ ແລະ ກວດກາ ທີ່ຈັດຕັ້ງປະຕິບັດວຽກຕິດຕາມ ແລະ ກວດກາ ຫຼື ສະໜອງຂໍ້ມູນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ;

2. ຜູ້ລະເມີດ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີພຶດຕິກຳ ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ;

3. ເງິນບຳເນັດ ໝາຍເຖິງ ຄ່າຕອບແທນສຳລັບ ຄະນະຕິດຕາມ ແລະ ກວດກາ ທີ່ດຳເນີນການກວດກາ ແລະ ກວດສອບ ທີ່ມີຜົນງານໃນການເຄື່ອນໄຫວຕ້ານ ແລະ ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ;

4. ຄ່າແຮງງານພິເສດ ໝາຍເຖິງ ຄ່າຕອບແທນ ເປັນເງິນ ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານໃນການສະໜອງຂໍ້ມູນຂ່າວສານ ທີ່ນຳໄປສູ່ການແກ້ໄຂ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ.

ມາດຕາ 4 ຫຼັກການຈັດຕັ້ງປະຕິບັດ

ການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບລະບຽບການທີ່ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການ ການເງິນ ກຳນົດໃນແຕ່ລະໄລຍະ;

2. ມີຄະນະຮັບຜິດຊອບຕິດຕາມກວດກາ ການນຳໃຊ້ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ເພື່ອໃຫ້ມີການຄຸ້ມຄອງຈະແຈ້ງ;

3. ຮັບປະກັນຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ, ຄວາມຖືກຕ້ອງຕາມເປົ້າໝາຍ ທີ່ຈະໄດ້ຮັບນະໂຍບາຍ, ມີຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ມີການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງ.

ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບ ວຽກດັດສົມໂທລະຄົມມະນາຄົມ ຢູ່ ສປປ ລາວ.

# ໝວດທີ 2
## ການນຳໃຊ້ເງິນທີ່ໄດ້ຮັບຈາກການປັບໃໝ

**ມາດຕາ 6 ເປົ້າໝາຍການນຳໃຊ້ເງິນ**

ເງິນທີ່ໄດ້ຈາກການປັບໃໝ ຫຼື ການຈຳໜ່າຍ ຊັບສິນທີ່ຖືກຮິບເປັນ ຂອງລັດ ຈາກການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ຈະຖືກນຳໃຊ້ເຂົ້າໃນວຽກດັດສົມ ແລະ ການພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ.

**ມາດຕາ 7 ການຄຸ້ມຄອງລາຍຮັບ-ລາຍຈ່າຍ**

ທຸກແຫຼ່ງລາຍຮັບ-ລາຍຈ່າຍ ຕ້ອງໄດ້ລວມສູນເປັນເອກະພາບ ແລະ ຄົບຖ້ວນ ດ້ວຍການຈົດຜ່ານລະບົບບັນຊີລວມສູນ ທີ່ຄັງເງິນແຫ່ງລັດ ແລະ ຖືກຕ້ອງຕາມແຜນງົບປະມານແຫ່ງລັດ ທີ່ສະພາແຫ່ງຊາດ ໄດ້ຮັບຮອງ.

ການເກັບເງິນຄ່າປັບໃໝທຸກກໍລະນີ ຕ້ອງໃຊ້ໃບບິນເກັບເງິນ ທີ່ອອກໃຫ້ໂດຍກະຊວງການເງິນ ແລະ ມອບເຂົ້າບັນຊີເງິນຝາກ, ເງິນປັບໃໝ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານດັດສົມໂທລະຄົມມະນາຄົມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ທີ່ເປີດປະໄວ້ທີ່ຄັງເງິນແຫ່ງລັດ.

ຕ້ອງໄດ້ສ້າງແຜນວຽກ, ແຜນງານ ແລະ ແຜນລາຍຈ່າຍງົບປະມານ ເປັນເດືອນ, ງວດ, 06 ເດືອນ ແລະ ປີ ຕາມສາລະບານງົບປະມານ ແລະ ຜ່ານການອະນຸມັດຈາກ ກະຊວງການເງິນ ຕາມກົດໝາຍ ແລະ ລະບຽບການເງິນທີ່ກ່ຽວຂ້ອງ.

ສຳລັບການເບີກຈ່າຍເງິນບຳເນັດ ແລະ ຄ່າແຮງງານພິເສດ ຕ້ອງມີເອກະສານຢັ້ງຢືນ ການມອບເງິນປັບໃໝເຂົ້າຄັງເງິນແຫ່ງລັດ ຢ່າງຄົບຖ້ວນ ແລະ ມີບົດບັນທຶກການສ້າງຜົນງານທີ່ໄດ້ຮັບການຢັ້ງຢືນຈາກຄະນະຮັບຜິດຊອບ.

**ມາດຕາ 8 ເປົ້າໝາຍທີ່ຈະໄດ້ຮັບເງິນນະໂຍບາຍ**

ເປົ້າໝາຍທີ່ຈະໄດ້ຮັບເງິນນະໂຍບາຍ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການປະຕິບັດໜ້າທີ່ ຫຼື ປະກອບສ່ວນຢ່າງຫ້າວຫັນເຂົ້າໃນວຽກງານຕິດຕາມ ແລະ ກວດກາ ລວມທັງການສະໜອງຂໍ້ມູນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ.

**ມາດຕາ 9 ລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ**

ລາຍການທີ່ໃຫ້ຫັກເປັນເງິນນະໂຍບາຍ ມີ ດັ່ງນີ້:

1. ເງິນຈາກການປັບໃໝ ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ;

2. ເງິນຈາກການຂາຍຊັບສິນທີ່ຖືກຮິບເປັນ ຂອງລັດ.

**ມາດຕາ 10 ຄ່າສິ້ນເປືອງ**

ຄ່າສິ້ນເປືອງ ແມ່ນ ຄ່າໃຊ້ຈ່າຍທີ່ນຳໃຊ້ເຂົ້າໃນການລົງກວດກາ ແລະ ກວດສອບຂອງຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ເປັນຕົ້ນ ຄ່າຊື້ຊຸດຄາດ, ບັດຕື່ມເງິນໂທລະສັບ, ນ້ຳມັນລົດ,

ຄ່າເດີນທາງ, ຄ່າທີ່ພັກ, ອັດຕາກິນ, ຄ່າອຸປະກອນຮັບໃຊ້ວຽກງານຕິດຕາມ ແລະ ກວດກາ, ຄ່າໃຊ້ຈ່າຍອື່ນໆ ທີ່ຈຳເປັນ ທີ່ຕິດພັນກັບການລົງຕິດຕາມ ກວດກາວຽກດັດສົມໂທລະຄົມມະນາຄົມ.

**ມາດຕາ 11 ອັດຕາສ່ວນແບ່ງທີ່ໄດ້ຮັບຈາກການປັບໃໝຂັ້ນສູນກາງ**

ອັດຕາສ່ວນແບ່ງທີ່ໄດ້ຮັບຈາກການປັບໃໝຂັ້ນສູນກາງ ພາຍຫຼັງຫັກຄ່າສິ້ນເປືອງ ຂອງຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ໃຫ້ປະຕິບັດ ດັ່ງນີ້:

1. ເງິນຈາກການປັບໃໝສາມສິບສ່ວນຮ້ອຍ (30%) ມອບເຂົ້າກອງທຶນພັດທະນາໂທລະຄົມ ແລະ ການທັນເປັນດິຈິຕອນ;

2. ສ່ວນທີ່ເຫຼືອ ເຈັດສິບສ່ວນຮ້ອຍ (70%) ໃຫ້ຄິດໄລ່ເປັນຮ້ອຍສ່ວນຮ້ອຍ (100%) ແລະ ຈັດແບ່ງ ດັ່ງນີ້:

2.1. ສີ່ສິບສ່ວນຮ້ອຍ (40%) ມອບເຂົ້າເປັນລາຍຮັບວິຊາການຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

2.2. ສີ່ສິບສ່ວນຮ້ອຍ (40%) ມອບເປັນເງິນບຳເນັດໃຫ້ ຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ຂັ້ນສູນກາງ;

2.3. ຊາວສ່ວນຮ້ອຍ (20%) ມອບເປັນຄ່າແຮງງານພິເສດ ໃຫ້ຜູ້ສະໜອງຂໍ້ມູນຂ່າວສານຈົນນຳໄປສູ່ການປັບໃໝ. ໃນກໍລະນີ ທີ່ບໍ່ມີຜູ້ສະໜອງຂໍ້ມູນຂ່າວສານ ແມ່ນໃຫ້ມອບ ຊາວສ່ວນຮ້ອຍ (20%) ດັ່ງກ່າວ ໃຫ້ຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ຂັ້ນສູນກາງ.

**ມາດຕາ 12 ອັດຕາສ່ວນແບ່ງທີ່ໄດ້ຮັບຈາກການປັບໃໝຂັ້ນທ້ອງຖິ່ນ**

ອັດຕາສ່ວນແບ່ງທີ່ໄດ້ຮັບຈາກການປັບໃໝຂັ້ນທ້ອງຖິ່ນ ພາຍຫຼັງຫັກຄ່າສິ້ນເປືອງ ຂອງຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ໃຫ້ປະຕິບັດ ດັ່ງນີ້:

1. ເງິນຈາກການປັບໃໝສາມສິບສ່ວນຮ້ອຍ (30%) ມອບເຂົ້າກອງທຶນພັດທະນາໂທລະຄົມ ແລະ ການຫັນ ເປັນດິຈິຕອນ;

2. ສ່ວນທີ່ເຫຼືອ ເຈັດສິບສ່ວນຮ້ອຍ (70%) ໃຫ້ຄິດໄລ່ເປັນຮ້ອຍສ່ວນຮ້ອຍ (100%) ແລະ ຈັດແບ່ງ ດັ່ງນີ້:

2.1. ສີ່ສິບສ່ວນຮ້ອຍ (40%) ມອບເຂົ້າເປັນລາຍຮັບວິຊາການຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

2.2. ສີ່ສິບສ່ວນຮ້ອຍ (40%) ມອບເປັນເງິນບຳເນັດໃຫ້ ຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ຂັ້ນທ້ອງຖິ່ນ;

2.3. ຊາວສ່ວນຮ້ອຍ (20%) ມອບເປັນຄ່າແຮງງານພິເສດ ໃຫ້ຜູ້ສະໜອງຂໍ້ມູນຂ່າວສານຈົນນຳໄປສູ່ການປັບໃໝ. ໃນກໍລະນີ ທີ່ບໍ່ມີຜູ້ສະໜອງຂໍ້ມູນຂ່າວສານ ແມ່ນໃຫ້ມອບ ຊາວສ່ວນຮ້ອຍ (20%) ດັ່ງກ່າວ ໃຫ້ຄະນະຕິດຕາມ ແລະ ກວດກາວຽກດັດສົມໂທລະຄົມມະນາຄົມ ຂັ້ນທ້ອງຖິ່ນ.

## ໝວດທີ 3
## ການອອກໃບສັ່ງມອບປັບໃໝ ແລະ ການເບີກຈ່າຍເງິນ ທີ່ໄດ້ຈາກການປັບໃໝ

**ມາດຕາ 13 ຂັ້ນຕອນການອອກໃບສັ່ງມອບປັບໃໝ ຂັ້ນສູນກາງ**

ໃນກໍລະນີ ພົບເຫັນພຶດຕິກຳ ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ທີ່ຂັ້ນສູນກາງ ແມ່ນມອບໃຫ້ພາກສ່ວນກ່ຽວຂ້ອງ ປະຕິບັດ ດັ່ງນີ້:

1. ມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ຕາງໜ້າຄະນະຮັບຜິດຊອບຕິດຕາມ ແລະ ກວດກາ ຂັ້ນສູນກາງ ອອກໃບສັ່ງມອບປັບໃໝ ຜູ້ລະເມີດທີ່ຕົນກວດພົບ ໃນຂອບເຂດທົ່ວປະເທດ;

2. ມອບໃຫ້ ກົມແຜນການ ແລະ ການເງິນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ສືບຕໍ່ຕິດຕາມ ການຊຳລະຕາມໃບສັ່ງມອບຄ່າປັບໃໝ ແລະ ອອກບິນຮັບ, ມອບ ແລະ ເບີກຈ່າຍເງິນປັບໃໝ ໂດຍຜ່ານການ ອະນຸມັດ ຈາກກົມງົບປະມານ, ກະຊວງການເງິນ;

3. ມອບໃຫ້ ກົມແຜນການ ແລະ ການເງິນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ດຳເນີນການໄລ່ ລຽງ, ສະຫຼຸບລາຍຮັບ-ລາຍຈ່າຍ ຈາກການປັບໃໝ;

4. ມອບໃຫ້ ກົມແຜນການ ແລະ ການເງິນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຄິດໄລ່ ແລະ ເບີກຈ່າຍຄ່າສິ້ນເປືອງ, ຄິດໄລ່ເງິນບຳເນັດ ແລະ/ຫຼື ຄ່າແຮງງານພິເສດ ຕາມເນື້ອໃນທີ່ໄດ້ລະບຸໄວ້ ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 14 ຂັ້ນຕອນການອອກໃບສັ່ງມອບປັບໃໝ ຂັ້ນທ້ອງຖິ່ນ**

ໃນກໍລະນີ ພົບເຫັນພຶດຕິກຳ ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກດັດສົມໂທລະຄົມມະນາຄົມ ທີ່ຂັ້ນທ້ອງຖິ່ນ ຮັບຜິດຊອບ ແມ່ນມອບໃຫ້ພາກສ່ວນກ່ຽວຂ້ອງ ປະຕິບັດ ດັ່ງນີ້:

1. ມອບໃຫ້ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ຕາງໜ້າຄະນະຮັບຜິດ ຊອບຕິດຕາມ ແລະ ກວດກາ ຂັ້ນທ້ອງຖິ່ນ ອອກໃບສັ່ງມອບປັບໃໝອອກບິນມອບ-ຮັບເງິນ ຈາກຜູ້ລະເມີດ;

2. ພາຍຫຼັງທີ່ໄດ້ຮັບຄ່າປັບໃໝມອບໃຫ້ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ດຳເນີນການໄລ່ລຽງ ລາຍຮັບ-ລາຍຈ່າຍ, ຫັກຄ່າສິ້ນເປືອງ, ຄິດໄລ່ເງິນບຳເນັດ ຫຼື ຄ່າແຮງງານພິເສດ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ແລະ ລາຍງານຜົນການປັບໃໝ ປະຈຳໄຕມາດ ຫຼື ປະຈຳປີ ໃຫ້ ກົມແຜນການ ແລະ ການເງິນ, ອົງການດັດສົມໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມຂັ້ນຕອນທີ່ ກະຊວງການເງິນ ວາງອອກ ເພື່ອຄວາມສະດວກໃນ ການຕິດຕາມ ແລະ ກວດກາ.

**ມາດຕາ 15 ຂັ້ນຕອນການເບີກຈ່າຍງົບປະມານ**

ຂັ້ນຕອນການເບີກຈ່າຍງົບປະມານ ປະຕິບັດຕາມຫຼັກການ ດັ່ງນີ້:

1. ຕ້ອງສ້າງແຜນນຳໃຊ້ເງິນປັບໃໝ ແລະ ເງິນທີ່ໄດ້ຈາກການຈຳໜ່າຍຊັບສິນ ທີ່ຖືກຮິບເປັນຂອງລັດ ໃຫ້ຖືກຕ້ອງຕາມເປົ້າໝາຍການນຳໃຊ້ ແລະ ສອດຄ່ອງກັບລະບຽບການ ການເງິນ ບົນພື້ນຖານການຫັກຄ່າສິ້ນ ເປືອງ, ເງິນບຳເນັດ ຫຼື ຄ່າແຮງງານພິເສດ ໃຫ້ຜູ້ມີຜົນງານ ຕາມທີ່ໄດ້ລະບຸໃນຂໍ້ຕົກລົງສະບັບນີ້;

2. ຄະນະຕິດຕາມ ແລະ ກວດກາທຸກຂັ້ນ ເປັນຜູ້ປະກອບເອກະສານ ເພື່ອຂໍອະນຸຍາດເບີກຈ່າຍເງິນບຳເນັດ ຫຼື ຄ່າແຮງງານພິເສດ ເພື່ອນຳສະເໜີ ຄະນະນຳ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ຄະນະນຳຂັ້ນທ້ອງຖິ່ນ ເພື່ອພິຈາລະນາເບີກຈ່າຍ ຕາມລະບຽບການໃນແຕ່ລະກໍລະນີ;

3. ຄະນະຕິດຕາມ ແລະ ກວດກາທຸກຂັ້ນ ຕ້ອງສະຫຼຸບລາຍງານ ລາຍຮັບ-ລາຍຈ່າຍ ກ່ຽວກັບ ການປະຕິບັດເງິນບຳເນັດ ຫຼື ຄ່າແຮງງານພິເສດໃຫ້ຜູ້ມີຜົນງານ ຊຶ່ງຕ້ອງສະຫຼຸບລາຍງານແຕ່ລະໄລຍະ, ແລ້ວສົ່ງໃຫ້ກົມແຜນການ ແລະ ການເງິນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 4
## ຄະນະຕິດຕາມ ແລະ ກວດກາ

**ມາດຕາ 16 ຄະນະຕິດຕາມ ແລະ ກວດກາ**

ຄະນະຕິດຕາມ ແລະ ກວດກາ ປະກອບມີ 2 ພາກສ່ວນ ດັ່ງນີ້:

1. ຄະນະຕິດຕາມ ແລະ ກວດກາ ຂັ້ນສູນກາງ ປະກອບມີຕາງໜ້າຈາກ ອົງການດັດສົມໂທລະຄົມມະນາຄົມ, ຫ້ອງການກະຊວງ, ກົມແຜນການ ແລະ ການເງິນ ແລະ ກົມກວດກາ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;

2. ຄະນະຕິດຕາມ ແລະ ກວດກາ ຂັ້ນທ້ອງຖິ່ນ ປະກອບມີຕາງໜ້າຈາກ ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ, ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານ ເມືອງ, ນະຄອນ, ບັນດາອົງການປົກຄອງທ້ອງຖິ່ນອື່ນ ທີ່ກ່ຽວຂ້ອງ;

3. ຕ້ອງໄດ້ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານ ປະຈຳງວດ, 06 ເດືອນ ແລະ ປີ ໃຫ້ກະຊວງການເງິນ ຮັບຊາບພາຍຫຼັງສຳເລັດການຈັດຕັ້ງປະຕິບັດສຳເລັດ ພາຍໃນ ສິບຫ້າ ວັນລັດຖະການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງຄະນະຕິດຕາມ ແລະ ກວດກາ ຂັ້ນສູນກາງ**

ຄະນະຕິດຕາມ ແລະ ກວດກາ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ສະເໜີ ແຜນການເຄື່ອນໄຫວວຽກງານຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກດັດສົມໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ ຫາ ຄະນະນຳກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;

2. ດຳເນີນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກດັດສົມໂທລະຄົມມະນາຄົມໃນຂອບເຂດທົ່ວປະເທດ;

3. ສະຫຼຸບລາຍງານຜົນການຕິດຕາມ ແລະ ກວດກາ ໃຫ້ຂັ້ນເທິງຮັບຊາບ ພາຍຫຼັງສຳເລັດການກວດກາ ສິບຫ້າ ວັນ;

4. ໄດ້ຮັບເງິນບຳເນັດ ຄົບຖ້ວນຕາມທີ່ລະບຸໄວໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

5. ສະເໜີຂໍນຳໃຊ້ເງິນທີ່ປັບໃໝ ຫຼື ເງິນຈາກການຂາຍຊັບສິນ ທີ່ຖືກຮິບເປັນ ຂອງລັດ ເຂົ້າໃນການພັດທະນາວຽກດັດສົມໂທລະຄົມມະນາຄົມ ທີ່ສອດຄ່ອງກັບລະບຽບການ ການເງິນ;

6. ກວດກາ ແລະ ເກັບກູ້ ອຸປະກອນໂທລະຄົມມະນາຄົມ ທີ່ລະເມີດກົດໝາຍ ແລະ ລະບຽບການ ດັດສົມໂທລະຄົມມະນາຄົມ ແລະ ລາຍງານບັນຫາ ສະພາບຕ່າງໆ ໃຫ້ຄະນະນໍາກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຊາບ;

7. ຕິດຕາມ ແລະ ກວດກາ ການມອບງົບປະມານ ເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ, ແຜນການຈັດຕັ້ງປະຕິບັດ ແລະ ການນໍາໃຊ້ງົບປະມານ ທີ່ໄດ້ຮັບຈາກການປັບໃໝ ຂອງຄະນະຕິດຕາມ ແລະ ກວດກາ ຂັ້ນທ້ອງຖິ່ນ;

8. ນໍາໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 18 ຄະນະຕິດຕາມ ແລະ ກວດກາ ຂັ້ນທ້ອງຖິ່ນ

ຄະນະຕິດຕາມ ແລະ ກວດກາ ຂັ້ນທ້ອງຖິ່ນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີ ແຜນການເຄື່ອນໄຫວວຽກງານຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກດັດສົມໂທລະຄົມມະນາຄົມໃນຂອບເຂດແຂວງ, ນະຄອນຫຼວງວຽງຈັນ ຫາ ຮອງປະທານປົກຄອງແຂວງ, ນະຄອນຫຼວງວຽງຈັນ ຜູ້ຊີ້ນໍາ, ອົງການດັດສົມໂທລະຄົມມະນາຄົມ ໃນແຕ່ລະໄລຍະ;

2. ດໍາເນີນການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດວຽກດັດສົມໂທລະຄົມມະນາຄົມໃນຂອບເຂດທີ່ຕົນຮັບຜິດຊອບ;

3. ສະຫຼຸບລາຍງານຜົນການຕິດຕາມ ແລະ ກວດກາໃຫ້ຂັ້ນເທິງຂອງຕົນ, ອົງການດັດສົມໂທລະຄົມມະນາຄົມ ແລະ ກົມແຜນການ ແລະ ການເງິນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຮັບຊາບ ຫຼັງຈາກສໍາເລັດການກວດກາ ພາຍໃນ ສິບຫ້າ ວັນ;

4. ໄດ້ຮັບເງິນບໍາເນັດ ຄົບຖ້ວນຕາມທີ່ລະບຸໄວໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;

5. ສະເໜີຂໍນໍາໃຊ້ເງິນທີ່ໄດ້ຈາກການປັບໃໝ ເຂົ້າໃນການພັດທະນາວຽກດັດສົມໂທລະຄົມມະນາຄົມ ທີ່ສອດຄ່ອງກັບຫຼັກການນໍາໃຊ້ງົບປະມານ;

6. ກວດກາ ແລະ ເກັບກູ້ ອຸປະກອນໂທລະຄົມມະນາຄົມ ທີ່ລະເມີດກົດໝາຍ ແລະ ລະບຽບການ ດັດສົມໂທລະຄົມມະນາຄົມ ແລະ ລາຍງານບັນຫາ ສະພາບຕ່າງໆ ໃຫ້ອົງການດັດສົມໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ຮອງປະທານຄະນະກໍາມະການປົກຄອງແຂວງ ຜູ້ຊີ້ນໍາ ຮັບຊາບ;

7. ດໍາເນີນການມອບງົບປະມານເຂົ້າກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ໃຫ້ຖືກຕ້ອງຄົບຖ້ວນ ຕາມອັດຕາສ່ວນທີ່ໄດ້ລະບຸໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

8. ນໍາໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 5
# ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການດັດສົມໂທລະຄົມມະນາຄົມ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ນັບແຕ່ສູນກາງຫາທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ;

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ